*ສະບັບວັນທີ 8 ສິງຫາ 2013, ຫຼັງກອງປະຊຸມເຈົ້າໜ້າທີ່ອາວຸໂສ*

# ບົດບັນທຶກກອງປະຊຸມແຜນການຮ່ວມມື ລະຫວ່າງ ກະຊວງອຸດສາຫະກຳ ແລະ ການຄ້າ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ກະຊວງພານິດແຫ່ງຣາຊະອານາຈັກໄທ ຄັ້ງທີ 5 ລະຫວ່າງ ວັນທີ 08-09 ສິງຫາ 2013 (ພສ 2556) ທີ່ໂຮງແຮມລາວພຣາຊາ, ນະຄອນຫຼວງວຽງຈັນ, ສປປ ລາວ

*************************

1. ກອງປະຊຸມແຜນການຮ່ວມມືລະຫວ່າງ ກະຊວງອຸດສາຫະກຳ ແລະ ການຄ້າ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ກະຊວງ ພານິດແຫ່ງຣາຊະອານາຈັກໄທ ຄັ້ງທີ 5 ລະຫວ່າງ ວັນທີ 08-09 ສິງຫາ 2013 (ພສ 2556) ທີ່ໂຮງແຮມລາວພຣາຊາ, ນະຄອນຫຼວງວຽງຈັນ, ສປປ ລາວ.

2. ທ່ານ ດຣ. ນາມ ວິຍະເກດ ລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ການຄ້າ ແຫ່ງ ສປປ ລາວ ເປັນປະທານຮ່ວມຝ່າຍລາວ ແລະ ທ່ານ ນິວັດທຳຣົງ ບຸນຊົງໄພສານ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີວ່າການກະຊວງພານິດ ແຫ່ງ ຣາຊະອານາຈັກໄທ ເປັນປະທານຮ່ວມຝ່າຍໄທ. ລາຍຊື່ຄະນະຜູ້ແທນຂອງທັງສອງຝ່າຍໄດ້ລະບຸຢູ່ໃນເອກະສານຊ້ອນທ້າຍ 1 ແລະ 2 ຕາມລຳດັບ.

3. ປະທານຮ່ວມຂອງສອງຝ່າຍເຫັນວ່າການພົວພັນທາງດ້ານເສດຖະກິດ-ການຄ້າ ແລະ ການລົງທຶນລະຫວ່າງ ລາວ ກັບ ໄທ ໄດ້ພັດທະນາໃນຫຼາຍດ້ານ ໂດຍສອງຝ່າຍມີມູນຄ່າການຄ້າ ແລະ ການລົງທຶນລະຫວ່າງກັນຂະຫຍາຍຕົວຢ່າງຕໍ່ເນື່ອງ ແລະ ມີທ່າອ່ຽງທີ່**ຈະຂະ**ຫຍາຍຕົວຕໍ່ໄປຕາມການດຳເນີນການລວມກຸ່ມທາງເສດຖະກິດອາຊຽນ.

## I. <u>ຜົນກອງປະຊຸມແຜນການຮ່ວມມືລະຫວ່າງພະແນກອຸດສາຫະກຳ ແລະ ການຄ້າແຂວງ ແລະ ພານິດຈັງຫວັດ ຊາຍແດນ ສປປ ລາວ-ໄທ ຄັ້ງທີ 5</u>

4. ສອງຝ່າຍຍິນດີຕໍ່ຜົນສຳເລັດຂອງກອງປະຊຸມແຜນການຮ່ວມມືລະຫວ່າງພະແນກອຸດສາຫະກຳ ແລະ ການຄ້າແຂວງ ແລະ ພານິດຈັງຫວັດຊາຍແດນ ສປປ ລາວ-ໄທ ຄັ້ງທີ 5 ທີ່ຝ່າຍໄທໄດ້ເປັນເຈົ້າພາບຈັດຂຶ້ນລະຫວ່າງວັນ ທີ 26-27 ກັນຍາ 2012 (ພສ 2555) ທີ່ ອຳເພີຊະອຳ, ຈັງຫວັດເພັດຊະບູລີ ແລະ ສະໜັບສະໜູນໃຫ້ມີກອງປະຊຸມດັ່ງ ກ່າວຢ່າງຕໍ່ເນື່ອງ.

## II. <u>ເປົ້າໝາຍມູນຄ່າການຄ້າແລະການລົງທຶນ:</u>

5. ທັງສອງຝ່າຍໄດ້ສະແດງຄວາມຍິນດີຕໍ່ກັບມູນຄ່າການຄ້າ ແລະ ການລົງທຶນລະຫວ່າງກັນທີ່ມີບາດກ້າວຂະຫຍາຍຕົວທີ່ສູງຊຶ່ງມູນຄ່າການຄ້າຂອງສອງປະເທດໃນປີ 2012 ສາມາດບັນລຸໄດ້ເຖິງ 4,848.08 ລ້ານໂດລາສະຫະລັດ ເພີ່ມຂຶ້ນ 24.37% ທຽບໃສ່ປີ 2011, ໃນນັ້ນມູນຄ່າການສົ່ງອອກໄປໄທແມ່ນ 1,238.29 ລ້ານໂດລາສະຫະລັດເພີ່ມຂຶ້ນ

9.55% ສໍາລັບມູນຄ່າການນໍາເຂົ້າຈາກໄທແມ່ນ 3,609.79 ລ້ານໂດລາສະຫະລັດເພີ່ມຂຶ້ນ 30.42% ເມື່ອທຽບໃສ່ປີ 2011.

ສໍາລັບ 6 ເດືອນຕົ້ນປີ 2013 ມູນຄ່າການຄ້າສາມາດບັນລຸໄດ້ປະມານ 2,561.12 ລ້ານໂດລາສະຫະລັດເພີ່ມຂຶ້ນ 3.47% ທຽບໃສ່ 6 ເດືອນຕົ້ນປີ 2012, ໃນນັ້ນການສົ່ງອອກສາມາດບັນລຸໄດ້ປະມານ 618.60 ລ້ານໂດລາສະຫະລັດ ແລະ ການນໍາເຂົ້າບັນລຸໄດ້ 1,742.52 ລ້ານໂດລາສະຫະລັດ.

ສອງຝ່າຍເຫັນວ່າມູນຄ່າການຄ້າມີແນວໂນ້ມເຕີບໂຕໄດ້ເຖິງ 8000 ລ້ານໂດລາສະຫະລັດໃນປີ 2015 ໃຫ້ສອງຝ່າຍສຶກສາແຜນຍຸດທະສາດ ແລະ ແຜນງານລະອຽດເພື່ອໃຫ້ບັນລຸຕົວເລກດັ່ງກ່າວ.

6. ມູນຄ່າການລົງທຶນຂອງໄທໃນ ສປປ ລາວ ແຕ່ປີ 2009-2012 ມີ 285 ຫົວໜ່ວຍ, ໃນນັ້ນສະເພາະປີ2012 ມີການລົງທຶນເພີ່ມເຕີມ 9 ຫົວໜ່ວຍ, ມູນຄ່າ 346,146,189 ໂດລາສະຫະລັດ.

## III. ການແລກປ່ຽນຂໍ້ມູນຂ່າວສານ

7. ທັງສອງຝ່າຍໄດ້ຢືນຢັນຄວາມສໍາຄັນຂອງການຮ່ວມມືທາງດ້ານການແລກປ່ຽນຂໍ້ມູນຂ່າວສານກ່ຽວກັບບັນດາລະບຽບການ ແລະ ມາດຕະການຕ່າງໆທີ່ຈະສົ່ງຜົນກະທົບຕໍ່ການສົ່ງເສີມການຄ້າ ແລະ ການລົງທຶນຊຶ່ງເຫັນດີໃຫ້ຫ້ອງການທີ່ປຶກສາດ້ານເສດຖະກິດ-ການຄ້າລາວ ປະຈໍາ ບາງກອກ, ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ ແລະ ກົມນະໂຍບາຍການຄ້າຕ່າງປະເທດຂອງລາວ ເປັນ ຜູ້ປະສານງານ ຝ່າຍລາວ ແລະ ສໍານັກງານສົ່ງເສີມການຄ້າລະຫວ່າງປະເທດທີ່ນະຄອນຫຼວງວຽງຈັນ, ສໍານັກງານຄະນະກໍາມະການສົ່ງເສີມການລົງທຶນ ແລະ ກົມເຈລະຈາການຄ້າລະຫວ່າງປະເທດເປັນຜູ້ປະສານງານຝ່າຍໄທ ໃນວຽກງານດັ່ງກ່າວ.

8. ຝ່າຍລາວແຈ້ງໃຫ້ຊາບວ່ານາຍົກລັດຖະມົນຕີ ແຫ່ງ ສປປ ລາວ ໄດ້ອອກຄໍາສັ່ງສະບັບເລກທີ 13/ນຍ, ລົງວັນທີ 11 ມິຖຸນາ 2012 ວ່າດ້ວຍການໂຈະການພິຈາລະນາ ແລະ ອະນຸຍາດໂຄງການລົງທຶນໃໝ່ສໍາລັບການຂຸດຄົ້ນ ແລະ ສໍາຫຼວດແຮ່ທາດ, ການປູກຢາງພາລາ ແລະ ໄມ້ວິກໃນຂອບເຂດທົ່ວປະເທດ ຈົນເຖິງວັນທີ 31 ທັນວາ 2015.

9. ຝ່າຍລາວສະແດງຄວາມຂອບໃຈຕໍ່ຝ່າຍໄທ ທີ່ໄດ້ແຈ້ງໃຫ້ຝ່າຍລາວຊາບກ່ຽວກັບແຈ້ງການຂອງກົມວິຊາການກະເສດ ວ່າດ້ວຍເງື່ອນໄຂການສົ່ງຜ່ານໃບຢາສູບຈາກ ສປປ ລາວ ປີ 2012.

## IV. ການອໍານວຍຄວາມສະດວກທາງດ້ານການຄ້າ

### (1) ການຈັດຕັ້ງປະຕິບັດການແຈ້ງພາສີຢູ່ຈຸດດຽວ (Single Stop Inspection-SSI)

10. ສອງຝ່າຍເຫັນຄວນສະໜັບສະໜູນໃຫ້ພາກສ່ວນທີ່ກ່ຽວຂ້ອງຂອງຕົນເລັ່ງລັດຂັ້ນຕອນພາຍໃນປະເທດ ເພື່ອໃຫ້ສາມາດຈັດຕັ້ງປະຕິບັດການກວດກາຮ່ວມກັນຢູ່ຈຸດດຽວ (Single Stop Inspection-SSI) ໄດ້ໂດຍໄວ ຊຶ່ງຈະຊ່ວຍໃຫ້ການຄ້າ ລະຫວ່າງ ສອງຝ່າຍມີຄວາມສະດວກຍິ່ງຂຶ້ນ, ຊຶ່ງທັງສອງຝ່າຍຄາດວ່າຈະສາມາດນໍາໃຊ້ໄດ້ໃນປີ 2013 ຕາມຜົນຂອງກອງປະຊຸມຄະນະລັດຖະບານຮ່ວມ ລາວ-ໄທ ຄັ້ງທີ 2 ຢ່າງບໍ່ເປັນທາງການ ໃນວັນທີ 19 ພຶດສະພາ 2013 ທີ່ຈັງຫວັດຊຽງໃໝ່, ຣາຊະອານາຈັກໄທ.

(2) **ດ່ານຊາຍແດນ**

11. ສອງຝ່າຍຮັບຊາບ ແລະ ຍິນດີຕໍ່ຜົນກອງປະຊຸມຄະນະກຳມາທິການຮ່ວມວ່າດ້ວຍການຮ່ວມມື ລາວ-ໄທ ຄັ້ງ 18 ລະຫວ່າງວັນທີ 1-3 ເມສາ 2013 ທີ່ ອຳເພີຫົວຫີນ,ຈັງຫວັດປະຈວບຄີຣີຂັນ, ຣາຊະອານາຈັກໄທ ຊຶ່ງໄດ້ສະໜັບສະໜູນໜ່ວຍງານທີ່ກ່ຽວຂ້ອງ ປຶກສາຫາລືໃນລາຍລະອຽດ ເພື່ອດຳເນີນການເປີດ ແລະ ຍົກລະດັບດ່ານຕາມທີ່ໄດ້ຕົກລົງກັນໃນກອງປະຊຸມຄະນະເຈົ້າແຂວງ ແລະ ຜູ້ວ່າຣາຊະການຈັງຫວັດຊາຍແດນ ລາວ-ໄທ ຄັ້ງທີ 9 ລະຫວ່າງວັນທີ 6-8 ມີນາ 2013 ທີ່ ບາງກອກ ໃຫ້ເປັນຮູບປະທຳໂດຍໄວ ຈຳນວນ 12 ແຫ່ງ.

12. ທັງສອງຝ່າຍຮັບຊາບ ແລະ ຍິນດີໃນການເປີດຈຸດຜ່ານແດນລາວ-ໄທ ຈຳນວນ 3 ແຫ່ງ ດັ່ງນີ້:

(1) ຝ່າຍລາວເປີດດ່ານສາກົນ 1 ແຫ່ງຄື: ດ່ານສາກົນສາມຫຼ່ຽມຄຳ, ເມືອງຕົ້ນເຜີ້ງ, ແຂວງບໍ່ແກ້ວ ໃນເດືອນ ກໍລະກົດ ປີ 2012.

(2) ຝ່າຍໄທເປີດດ່ານຖາວອນ 2 ແຫ່ງຄື: ດ່ານຖາວອນສາມຫຼ່ຽມທອງຄຳ, ອຳເພີຊຽງແສນ, ຈັງຫວັດຊຽງລາຍ ແລະ ດ່ານຖາວອນພູດູ່, ອຳເພີບ້ານໂຄກ, ຈັງຫວັດອຸຕະລະດິດ ໃນວັນທີ 19 ພຶດສະພາ 2013.

13. ທັງສອງຝ່າຍຮັບຊາບ ແລະ ຍິນດີໃນການຂະຫຍາຍເວລາດ່ານທ້ອງຖິ່ນບ້ານໜອງດາ, ເມືອງສີໂຄດຕະບອງ, ນະຄອນຫຼວງວຽງຈັນ ແລະ ຈຸດຜ່ອນປົນບ້ານໝໍ້, ອຳເພີສີຊຽງໃໝ່, ຈັງຫວັດໜອງຄາຍ ຈາກ 2 ວັນ ເປັນ 3 ວັນ ຕໍ່ອາທິດ.

14. ສອງຝ່າຍເຫັນຄວນສະໜັບສະໜູນໃຫ້ໜ່ວຍງານທີ່ກ່ຽວຂ້ອງພິຈາລະນາຄວາມເປັນໄປໄດ້ໃນການເປີດ/ຍົກລະດັບດ່ານຕາມຄວາມເໝາະສົມ ໂດຍອີງຕາມປັດໃຈດ້ານຄວາມໝັ້ນຄົງ, ເສດຖະກິດ ແລະ ສັງຄົມ ເພື່ອສະໜັບສະໜູນ ແລະ ຮອງຮັບການຂະຫຍາຍຕົວທາງດ້ານການຄ້າ-ການລົງທຶນ ແລະ ການທ່ອງທ່ຽວ ລະຫວ່າງກັນ.

(3) **ສິນຄ້າຜ່ານແດນ**

15. ສອງຝ່າຍເຫັນດີຊຸກຍູ້ໃຫ້ກະຊວງໂຍທາທິການ ແລະ ຂົນສົ່ງຂອງລາວ ແລະ ກະຊວງຄົມມະນາຄົມຂອງໄທ ໃຫ້ມີການປຶກສາຫາລືກ່ຽວກັບການພັດທະນາ ແລະ ນຳໃຊ້ເສັ້ນທາງເລກທີ 8 ແລະ12 ໃຫ້ເກີດປະໂຫຍດຫຼາຍຂຶ້ນ.

16. ຝ່າຍໄທສະເໜີໃຫ້ມີການຈັດກິດຈະກຳການພົບປະ ແລະ ປຶກສາຫາລື ລະຫວ່າງ ພາກເອກະຊົນ ກັບ ໜ່ວຍງານທີ່ກ່ຽວຂ້ອງຂອງລາວ ແລະ ໄທ ເພື່ອຊອກຫາແນວທາງການຮ່ວມມືໃນການລົງທຶນເພື່ອພັດທະນາ ແລະ ສ້າງສິ່ງອຳນວຍຄວາມສະດວກຕ່າງໆຕາມແລວເສັ້ນທາງດັ່ງກ່າວ ເພື່ອໃຫ້ລາວໄດ້ຮັບປະໂຫຍດຈາກການນຳໃຊ້ເສັ້ນທາງດັ່ງກ່າວຢ່າງເຕັມທີ່.

## V. <u>ແຜນການຮ່ວມມືທາງດ້ານການຄ້າ ແລະ ການລົງທຶນ ໃນປີ 2013-2014</u>

(1) **ການຮ່ວມມືດ້ານວິຊາການ**

17. ສອງຝ່າຍຮັບຊາບຄວາມຄືບໜ້າການດຳເນີນງານໂຄງການ ICT ເພື່ອພັດທະນາລະບົບຖານຂໍ້ມູນການຄ້າພາຍໃຕ້ຂອບການຮ່ວມມືດ້ານວິຊາການ ລາວ-ໄທ ທີ່ ຝ່າຍໄທໄດ້ໃຫ້ການຊ່ວຍເຫຼືອແກ່ຝ່າຍລາວ ແລະ ຮັບຊາບວ່າ ຝ່າຍໄທຈະຈັດສົ່ງຄະນະທີ່ປຶກສາໂຄງການມາລາວ ໃນເດືອນ ຕຸລາ 2013 ເພື່ອປຶກສາຫາລື ກັບ ໜ່ວຍງານທີ່ກ່ຽວຂ້ອງຂອງລາວໂດຍຝ່າຍລາວຍິນດີອຳນວຍຄວາມສະດວກໃຫ້ແກ່ຄະນະທີ່ປຶກສາໂຄງການ. ສອງຝ່າຍສືບຕໍ່ຊຸກຍູ້ເລັ່ງລັດໃຫ້ໂຄງການດັ່ງກ່າວມີຄວາມຄືບໜ້າໂດຍໄວ ແລະ ສຳເລັດຜົນພາຍໃນກຳນົດເວລາປີ 2015.

18. ຝ່າຍລາວສະແດງຄວາມຂອບໃຈຕໍ່ການຊ່ວຍເຫຼືອຂອງຝ່າຍໄທ ໃນການສ້າງຄວາມເຂັ້ມແຂງໃຫ້ແກ່ພາກລັດ ແລະ ພາກເອກະຊົນໃນການຈັດຝຶກອົບຮົມ ແລະ ທັດສະນະສຶກສາລວມທັງການຈັດສຳມະນາໃນຫົວຂໍ້: ການກຽມຄວາມພ້ອມໃຫ້ແກ່ ສປປ ລາວ ໃນການກ້າວສູ່ປະຊາຄົມເສດຖະກິດອາຊຽນ (AEC) 2015, ການຝຶກອົບຮົມໃນຫົວຂໍ້: Capacity for Negotiation Free Trade Agreement, ການຈັດຝຶກອົບຮົມດ້ານ Self-certification ແລະ ອື່ນໆ.

19. ຝ່າຍລາວສະເໜີໃຫ້ຝ່າຍໄທສືບຕໍ່ໃຫ້ການຊ່ວຍເຫຼືອໃນການສ້າງຄວາມເຂັ້ມແຂງດ້ານຊັບພະຍາກອນມະນຸດໃຫ້ແກ່ລາວ, ຫົວຂໍ້ສະເໜີຄັດຕິດໃນເອກະສານຊ້ອນທ້າຍ 3.

## (2) ງານວາງສະແດງສິນຄ້າ

20. ສອງຝ່າຍຍິນດີກັບຜົນສຳເລັດຂອງການຮ່ວມມືງານວາງສະແດງສິນຄ້າ ແລະ ກອງປະຊຸມພົບປະທຸລະກິດລາວ-ໄທ ປະຈຳປີ 2013 ລະຫວ່າງວັນທີ 3-7 ກໍລະກົດ 2013 ທີ່ ນະຄອນຫຼວງວຽງຈັນ. ຝ່າຍໄທຍິນດີ ສືບຕໍ່ໃຫ້ການຊ່ວຍເຫຼືອ ແລະ ຊຸກຍູ້ ໃຫ້ພາກລັດ ແລະ ພາກທຸລະກິດຂອງລາວ ໃນການເຂົ້າຮ່ວມງານວາງສະແດງສິນຄ້າໄທ ລວມເຖິງ ງານວາງສະແດງສິນຄ້າ ທີ່ຈັດໃນແຂວງຕິດກັບຊາຍແດນຂອງໄທ ໃນປີງົບປະມານ 2014 (ພສ.2557).

21. ສອງຝ່າຍເຫັນດີທີ່ຈະສືບຕໍ່ຮ່ວມມືກັນໃນການຈັດງານວາງສະແດງສິນຄ້າ ລາວ-ໄທ ໃນແຕ່ລະປີ ໂດຍຝ່າຍລາວສະເໜີໃຫ້ຝ່າຍໄທ ພິຈາລະນາຈັດງານວາງສະແດງສິນຄ້າໃນແຂວງໃໝ່ອື່ນໆຂອງລາວ ໂດຍທັງສອງຝ່າຍຈະຄັດເລືອກນັກທຸລະກິດ ແລະ ຜູ້ປະກອບກິດຈະການທີ່ມີຄວາມສາມາດ ແລະ ຄວາມພ້ອມໃນການຜະລິດ ແລະ ການພັດທະນາຄຸນະພາບສິນຄ້າ ເພື່ອໃຫ້ສາມາດຕອບສະໜອງ ຄວາມຕ້ອງການຂອງລູກຄ້າທີ່ເຂົ້າເບິ່ງງານວາງສະແດງສິນຄ້າ.

22. ສອງຝ່າຍເຫັນດີໃຫ້ ກົມສົ່ງເສີມການຄ້າລະຫວ່າງປະເທດ ໂດຍສຳນັກງານການຄ້າລະຫວ່າງປະເທດ ທີ່ ນະຄອນຫຼວງວຽງຈັນ ແລະ ກົມສົ່ງເສີມ ແລະ ພັດທະນາສິນຄ້າ ພິຈາລະນາຂຶ້ນແຜນການກ່ຽວກັບການຈັດງານວາງສະແດງສິນຄ້າຮ່ວມກັນໃນແຕ່ລະປີ ລວມເຖິງ ແຜນການເຊີນຝ່າຍລາວເຂົ້າຮ່ວມງານວາງສະແດງສິນຄ້າໃນໄທ ໂດຍຝ່າຍໄທຈະໃຫ້ການສະໜັບສະໜູນເນື້ອທີ່ວາງສະແດງສິນຄ້າໃຫ້ແກ່ລາວຈຳນວນ 6 ຫ້ອງ ປະມານປີລະ 7 ງານ.

## (3) ການລົງທຶນ

23. ສອງຝ່າຍສືບຕໍ່ຊຸກຍູ້ສົ່ງເສີມໃຫ້ພາກທຸລະກິດຂອງໄທມາລົງທຶນຢູ່ລາວ ໃຫ້ເພີ່ມຂຶ້ນເລື້ອຍໆ ໂດຍສະເພາະຢູ່ເຂດອຸດສາຫະກຳ, ເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະຕ່າງໆຢູ່ໃນລາວ.

## (4) ການຄ້າຊາຍແດນ

24. ສອງຝ່າຍຍິນດີຕໍ່ກັບການຂະຫຍາຍຕົວຂອງການຄ້າຊາຍແດນທີ່ມີອັດຕາສ່ວນ ຫຼາຍກວ່າ 80% ຂອງການຄ້າລວມ ລາວ-ໄທ ແລະ ສະໜັບສະໜູນໃຫ້ ພະແນກອຸດສາຫະກຳ ແລະ ການຄ້າແຂວງ ແລະ ພານິດຈັງຫວັດຊາຍແດນລາວ-ໄທ ສືບຕໍ່ປະສານງານ, ແລກປ່ຽນຂໍ້ມູນຂ່າວສານທາງດ້ານລະບຽບການ ແລະ ເຮັດວຽກຮ່ວມກັນໃນການສົ່ງເສີມ, ອຳນວຍຄວາມສະດວກ ແລະ ແກ້ໄຂອຸປະສັກຕໍ່ກັບການຄ້າຜ່ານຊາຍແດນຢ່າງປົກກະຕິ.

### (5) ການຮ່ວມມືດ້ານ ODOP\OTOP

25. ຝ່າຍລາວສະແດງຄວາມຂອບໃຈຕໍ່ການຊ່ວຍເຫຼືອຂອງຝ່າຍໄທໃນການຈັດຝຶກອົບຮົມ ໃນຫົວຂໍ້ "ການອອກແບບສິນຄ້າ ແລະ ຫຸ້ມຫໍ່ຜະລິດຕະພັນ" ໃນໄລຍະທີ່ຜ່ານມາ. ໃນນີ້, ຝ່າຍລາວສະເໜີໃຫ້ຝ່າຍໄທ ສືບຕໍ່ ພິຈາລະນາໃຫ້ການຊ່ວຍເຫຼືອການຈັດຝຶກອົບຮົມເຊັ່ນໃນຫົວຂໍ້ "ວິທີການຫຸ້ມຫໍ່ ແລະ ວິທີການແປຮູບຜະລິດຕະພັນ ODOP/ OTOP " ຊຶ່ງຝ່າຍໄທ ຮັບທີ່ຈະປະສານແຈ້ງໃຫ້ໜ່ວຍງານທີ່ຮັບຜິດຊອບພິຈາລະນາຕໍ່ໄປ.

## VI. ການຮ່ວມມືດ້ານອື່ນໆ

26. ສອງຝ່າຍແຈ້ງໃຫ້ຊາບວ່າ ກໍາລັງປຶກສາຫາລືກ່ຽວກັບ ການສ້າງຕັ້ງຄະນະປະຕິບັດງານຮ່ວມສອງຝ່າຍ (Joint Bilateral Working Committee) ເພື່ອດໍາເນີນການຕາມບົດບັນທຶກຄວາມເຂົ້າໃຈ (MOU) ລະຫວ່າງລັດຖະບານ ສປປ ລາວ ແລະ ລັດຖະບານໄທ ວ່າດ້ວຍການຮ່ວມມືໃນການສົ່ງເສີມໂຄງການລົງທຶນກະສິກໍາແບບມີສັນຍາພາຍໃຕ້ກອບຍຸດທະສາດການຮ່ວມມື ທາງດ້ານເສດຖະກິດ ເອຣາວະດີ-ເຈົ້າພະຍາ-ແມ່ນໍ້າຂອງ (ACMECS) ເພື່ອໃຫ້ເກີດປະໂຫຍດສູງສຸດຮ່ວມກັນ.

27. ສອງຝ່າຍເຫັນໄດ້ກ່ຽວກັບຄວາມສໍາຄັນຂອງການຫຼຸດຜ່ອນບັນດາອຸປະສັກທາງການຄ້າ ໃນການຊຸກຍູ້ເພີ່ມມູນຄ່າການຄ້າລາວ-ໄທ ເພື່ອໃຫ້ບັນລຸເປົ້າໝາຍໃນປີ 2015, ໂດຍຝ່າຍລາວສະເໜີໃຫ້ຝ່າຍໄທ ພິຈາລະນາ ລົບລ້າງການກໍານົດໄລຍະເວລາໃນການນໍາເຂົ້າສາລີລ້ຽງສັດຂອງພາກເອກະຊົນຈາກ ສປປ ລາວ.

28. ສອງຝ່າຍເຫັນໄດ້ຄວາມສໍາຄັນຂອງການຮ່ວມມືດ້ານກະສິກໍາໃນການຂະຫຍາຍການພົວພັນທາງດ້ານການຄ້າ ແລະ ການລົງທຶນ ລະຫວ່າງ ລາວ-ໄທ ໂດຍຝ່າຍລາວ ສະເໜີໃຫ້ຝ່າຍໄທໃຫ້ການຊ່ວຍເຫຼືອດ້ານການເສີມສ້າງຂີດຄວາມສາມາດດ້ານວິຊາການ ແລະ ເຕັກນິກ ໃນການປະເມີນຄວາມສ່ຽງ ແລະ ການກວດສອບດ້ານສຸຂະນາໄມພືດພ້ອມທັງມາດຕະຖານ ແລະ ຄຸນະພາບຂອງສິນຄ້າກະສິກໍາ ຂອງ ລາວ ເພື່ອສົ່ງອອກໄປໄທ ເຊັ່ນ: ການປະເມີນຄວາມສ່ຽງ ແລະ ການກວດສອບດ້ານສຸຂານາ ໄມພືດຂອງ ໝາກອຶ, ໝາກເລັ່ນ, ມັນຕົ້ນຕາກແຫ້ງ ແລະ ສິນຄ້າກະສິກໍາອື່ນໆຂອງລາວ ຊຶ່ງຝ່າຍໄທຍິນດີຮັບພິຈາລະນາໃຫ້ການຊ່ວຍເຫຼືອດັ່ງກ່າວໂດຍຈະປະສານແຈ້ງໃຫ້ໜ່ວຍງານທີ່ຮັບຜິດຊອບພິຈາລະນາຕໍ່ໄປ.

29. ຝ່າຍໄທແຈ້ງໃຫ້ຊາບວ່າ ມະຫາວິທະຍາໄລຫໍການຄ້າໄທ ຍິນດີໃຫ້ການສະໜັບສະໜູນທຶນການສຶກສາ ລະດັບປະລິນຍາຕີ ແລະ ປະລິນຍາໂທ ແກ່ນັກສຶກສາຂອງປະເທດສະມາຊິກອາຊຽນ ຊຶ່ງນັກສຶກສາລາວ ສາມາດຂໍຮັບທຶນການສຶກສາໄດ້ ແລະ ສະເໜີໃຫ້ຝ່າຍລາວຊ່ວຍປະສານກັບມະຫາວິທະຍາໄລຕ່າງໆຂອງລາວ ເພື່ອປະຊາສໍາພັນທຶນການສຶກສາດັ່ງກ່າວ.

**<u>ກຳນົດເວລາ ແລະ ສະຖານທີ ຈັດກອງປະຊຸມແຜນການຮ່ວມ ລະຫວ່າງ ກະຊວງອຸດສາຫະກຳ ແລະ ການຄ້າ ແຫ່ງ ສປປ ລາວ ແລະ ກະຊວງພານິດ ແຫ່ງ ຣາຊະອານາຈັກໄທ ຄັ້ງທີ 6.</u>**

30. ທັງສອງຝ່າຍເຫັນດີຮ່ວມກັນໃຫ້ຈັດກອງປະຊຸມແຜນການຮ່ວມມື ລະຫວ່າງ ສອງກະຊວງອຸດສາຫະກຳ ແລະ ການຄ້າ ແຫ່ງ ສປປ ລາວ ແລະ ກະຊວງພານິດໄທຄັ້ງທີ 6 ຂຶ້ນຢູ່ຣາຊະອານາຈັກໄທ ໃນລະຫວ່າງເດືອນພຶດສະພາ ປີ 2014. ສຳລັບກຳນົດເວລາ ແລະ ສະຖານທີ່ຈັດກອງປະຊຸມ, ສອງຝ່າຍຈະປະສານນຳກັນຕື່ມອີກ .

31. ທັງສອງຝ່າຍສະແດງຄວາມດີໃຈຕໍ່ຜົນສຳເລັດຂອງກອງປະຊຸມ ແລະ ຢືນຢັນເຈດຈຳນົງທີ່ຈະສືບຕໍ່, ເສີມຂະຫຍາຍການພົວພັນການຄ້າ ແລະ ການລົງທຶນຮ່ວມກັນເພື່ອການພັດທະນາ ແລະ ຮ່ວມກັນກ້າວເຂົ້າເປັນປະຊາຄົມເສດຖະກິດອາຊຽນ, ໃນໂອກາດນີ້ ຫົວໜ້າຄະນະຝ່າຍໄທສະແດງຄວາມຂອບໃຈທີ່ຝ່າຍລາວໃຫ້ການຕ້ອນຮັບຢ່າງອົບອຸ່ນໃນການເຂົ້າຮ່ວມກອງປະຊຸມໃນຄັ້ງນີ້.